## ມິຊຊາອາທິດທີ 4 ກຳນົດພຣະກຣິສຕະຄົມ

## ວັນທີ 19 ທັນວາ 2021



**ພຣະວໍລະສານໂດຍນັກບຸນລູກາ 1, 39-45**

ໃນເວລານັ້ນ, ພຣະນາງມາຣີອາໄດ້ຟ້າວຮີບອອກເດີນທາງໄປເມືອງໜຶ່ງໃນແຖບພູແຂວງຢູເດ. ພຣະນາງເຂົ້າໄປໃນເຮືອນຂອງຊາກາຣີແລະຄຳນັບຖາມຂ່າວນາງເອລີຊາແບັດ.

ພໍແຕ່ນາງເອລີຊາແບັດໄດ້ຍິນຄຳຖາມຂ່າວ, ບຸດໃນອຸທອນຂອງນາງກໍເຫັງຕີງ ແລະນາງເອລີຊາແບັດກໍເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງຮ້ອງຂຶ້ນວ່າ: ພຣະນາງມີບຸນລື່ນຍິງໃດໆ ແລະບຸດອຸທອນພຣະນາງເປັນເຈົ້າຈອມບຸນ. ເຫດໃດພຣະມານດາຂອງພຣະອົງເຈົ້າຂອງຂ້າພະເຈົ້າຈຶ່ງສະເດັດມາຫາຂ້າພະເຈົ້າດັ່ງນີ້? ພໍແຕ່ຄຳຄຳນັບຖາມຂ່າວຂອງພຣະນາງເຖິງຫູຂ້າພະເຈົ້າ, ບຸດໃນອຸທອນຂອງຂ້າພະເຈົ້າກໍເຫັງຕີງດ້ວຍຄວາມຍິນດີ. ບຸນລາບແກ່ພຣະນາງທີ່ໄດ້ເຊື່ອວ່າສິ່ງທີ່ພຣະເປັນເຈົ້າຊົງບອກກັບພຣະນາງນັ້ນຈະສຳເລັດບໍລິບູນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 39-45**

ວັນເວລາແຫ່ງການສະເດັດມາຂອງພຣະຜູ້ກູ້ໄຖ່ຂອງພວກເຮົາໃກ້ເຂົ້າມາແລ້ວ. ພຣະອົງມາເພື່ອນຳຄວາມຍິນດີ, ຄວາມຫວັງແລະຄວາມຮອດມາໃຫ້ມະນຸດ. ດັ່ງທີ່ພວກເຮົາໄດ້ຟັງໃນວາຈາພຣະເຈົ້າວັນນີ້ທີ່ກ່າວເຖິງພຣະນາງມາຣີອາມານດາພຣະເຢຊູເຈົ້າໄປຢ້ຽມຢາມນາງເອລີຊາແບັດຜູ້ເປັນຍາດຕິພີ່ນ້ອງຂອງພຣະນາງ.

ການທີ່ພຣະນາງມາຣີອາໄປຢ້ຽມຢາມນາງເອລີຊາແບັດນີ້ ບໍ່ພຽງແຕ່ແມ່ນການໄປພົບພໍ້ຖາມສະບາຍແລະໃຫ້ກຳລັງໃຈນາງເອລີຊາແບັດທີ່ພວມຖືພາເປັນເວລາຫົກເດືອນເທົ່ານັ້ນ, ແຕ່ຍັງເປັນການນຳພຣະບຸດຂອງພຣະເຈົ້າທີ່ຢູ່ໃນອຸທອນຂອງພຣະນາງມາຣີອາມາໃຫ້ນາງເອລີຊາແບັດດ້ວຍ. ແລະບໍ່ພຽງແຕ່ນາງເອລີຊາແບັດທີ່ມີຄວາມຍິນດີຍ້ອນໄດ້ຕ້ອນຮັບມານດາຂອງພຣະບຸດພຣະເຈົ້າ, ແຕ່ບຸດໃນອຸທອນຂອງນາງເອລີຊາແບັດກໍດີ້ນດັ້ນສະແດງອອກເຖິງຄວາມຍິນດີນີ້ເຊັ່ນດຽວກັນ.

ຄວາມຍິນດີຂອງພຣະນາງມາຣີອາແລະນາງເອລີຊາແບັດພ້ອມທັງບຸດຂອງນາງຈະເປັນຄວາມຍິນດີຂອງພວກເຮົາ ກໍຕໍ່ເມື່ອພວກເຮົາຮັບເອົາພຣະເຢຊູເຈົ້າຜູ້ຊຶ່ງຈະບັງເກີດມານີ້ເຂົ້າໃນຊີວິດຂອງພວກເຮົາ. ແລະພວກເຮົາກໍມີໜ້າທີ່ນຳພຣະອົງໄປໃຫ້ຄົນອື່ນໄດ້ຮູ້ຈັກແລະສຳພັດໄດ້ເຖິງຄວາມຍິນດີທີ່ມາຈາກພຣະອົງ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ໄດ້ລົງມາເກີດໃນຈິດໃຈພວກເຮົາ ເໝືອນກັບພຣະວາຈານາດໄດ້ລົງມາຮັບເອົາກາຍໃນອຸທອນຂອງພຣະນາງມາຣີອາ. ເພື່ອພຣະວານາດແຫ່ງຄວາມຮອດແລະຄວາມຍິນດີນີ້ຈະຊ່ວຍພວກເຮົາໃຫ້ພົບກັບຄວາມສຸກທີ່ແທ້ຈິງອັນແມ່ນການກູ້ໄຖ່ທີ່ມາຈາກພຣະອົງ. ເພື່ອພວກເຮົາຈະໄດ້ກາຍເປັນເຄື່ອງມືຂອງພຣະເຈົ້າໃນການນຳເອົາຄວາມຍິນດີແລະຄວາມຮອດນີ້ໄປໃຫ້ທຸກຄົນຮູ້ຈັກ.

**ພາວະນາ**

ຂໍໃຫ້ພຣະວາຈາເຈົ້າໄດ້ລົງມາບັງເກີດເປັນມະນຸດ ແລະໄດ້ສະຖິດໃນພວກເຮົາແລະທ່າມກາງພວກເຮົາດ້ວຍເທີ້ນ. ໂອອົງແອມມານູແອນ ໂຜດສະເດັດມາເຖີດ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ